**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ຫ້ອງການ

ເລກທີ.386.../ຫກ

ນະຄອນຫຼວງວຽງຈັນ, ວັນທີ..14....ພຶດສະພາ 2026

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໃນນາມຕາງໜ້າຄະນະຮັບຜິດຊອບ ຈັດຊື້ເຄື່ອງອຸປະກອນ (ຊັບສິນບັດຄົງທີ ) ຮັບໃຊ້ຫ້ອງການ ຂໍເຊີນ ບັນດາບໍລິສັດ ແລະ ຫ້າງຮ້ານ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ແຂ່ງຂັນລາຄາ ສຳລັບການສະໜອງເຄື່ອງອຸປະກອນຮັບໃຊ້ຫ້ອງການ ປະຈຳປີ 2026 ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ມີຄວາມສະດວກ ແລະ ມີປະສິດທິພາບສູງ. ກຳນົດເວລາໃນການມອບ-ຮັບແມ່ນພາຍໃນ 30 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດ ແລະ ຫ້າງຮ້ານທີ່ມີຄຸນວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຕຶກອິນຊີ) ເບີໂທຕິດຕໍ່ 020 54519593, 020 22405356 ໃນໂມງລັດຖະການ;
4. ເອກະສານປະມູນເລີ່ມຂາຍ ແຕ່ວັນທີ 14 ພຶດສະພາ 2026 ຫາ ວັນທີ 19 ມິຖຸນາ 2026 ໃນລາຄາ 1.000,000 ກີບ/ຊອງ. ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະນຳໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນ ເວລາ 9:00 ໂມງ ຂອງວັນທີ 19 ມິຖຸນາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດ ໃນວັນທີ 19 ມິຖຸນາ 2026 ເວລາ 10:30 ໂມງ ທີ່ຫ້ອງປະຊຸມຊັ້ນ 02 ຕຶກສິນໄຊ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໂດຍຊອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດ ແລະ ຫ້າງຮ້ານທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;
6. ທຸກໆຊອງປະມູນ ຕ້ອງມີການຄ້ຳປະກັນດ້ວຍແຊັກ(ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ ຊຶ່ງມີມູນຄ່າຂອງການຄ້ຳປະກັນ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າ ທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວ ຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ວຽງສະໄໝ ບຸນມະນີວອນ